ສຳນັກງານໃຫຍ່

ເລກທີ: 055 /ທຄຕລ 2018
ນະຄອນຫຼວງວຽງຈັນ, ວັນທີ: 28 DEC 2018

ໜັງສືຊີ້ແຈງ

ຮຽນ: - ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
- ທ່ານຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
- ບັນດາທ່ານຜູ້ຖືຮຸ້ນ ທຄຕລ, ນັກລົງທຶນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ.

ເລື່ອງ: ຊີ້ແຈງເອກະສານລາຍງານຖານະການເງິນປະຈຳ 06 ເດືອນຕົ້ນປີ 2018.

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014;
- ອີງຕາມລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານລາຍງານການເງິນ (IFRS), ເລກທີ 19/ຄຄຊ, ລົງວັນທີ 23 ພະຈິກ 2018;
- ອີງຕາມໜັງສືແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານລາຍງານການເງິນສະບັບເລກທີ 9 (IFRS9), ເລກທີ 1659/ກບງ, ລົງວັນທີ 14 ທັນວາ 2018.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດລາຍງານມາຍັງບັນດາທ່ານຊາບວ່າ ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ທີ່ກ່ຽວຂ້ອງ ທຄຕລ ຕ້ອງເປີດເຜີຍເອກະສານລາຍງານຖານະການເງິນປະຈຳ 06 ເດືອນຕົ້ນປີ 2018 ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ພາຍໃນວັນທີ 29/08/2018 ແຕ່ໃນການປະຕິບັດຕົວຈິງເຫັນວ່າມີຄວາມລ້າຊ້າກ່ວາເວລາທີ່ກຳນົດ. ປະຈຸບັນ ເອກະສານລາຍງານການເງິນດັ່ງກ່າວ ແມ່ນໄດ້ສຳເລັດສົມບູນແລ້ວ.

ສຳລັບສາເຫດທີ່ເຮັດໃຫ້ການເປີດເຜີຍຂໍ້ມູນໃນຄັ້ງນີ້ມີຄວາມລ້າຊ້າ ແມ່ນຕິດພັນກັບການປ່ຽນແປງການນຳໃຊ້ມາດຕະຖານລາຍງານການເງິນສາກົນສະບັບໃໝ່ ເລກທີ 9 ເຄື່ອງມືທາງການເງິນ (IFRS 9 Financial Instrument) ປ່ຽນແທນມາດຕະຖານການບັນຊີສາກົນເລກທີ 39 (IAS 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດມູນຄ່າ) ຊຶ່ງການປ່ຽນແປງດັ່ງກ່າວ ທຄຕລ ໄດ້ສຸມໃສ່ກະກຽມຄວາມພ້ອມດ້ວຍຄວາມຮັບຜິດຊອບສູງ ແຕ່ຍັງບໍ່ສາມາດປະຕິບັດໄດ້ຢ່າງເຕັມສ່ວນ. ດັ່ງນັ້ນ, ການສ້າງເອກະສານລາຍງານການເງິນຂອງ ທຄຕລ ແມ່ນຍັງນຳໃຊ້ມາດຕະຖານບັນຊີສາກົນ IAS 39 ດັ່ງທີ່ໄດ້ປະຕິບັດໃນຊຸມປີຜ່ານມາ. ໂດຍອີງຕາມແຈ້ງການຈາກຜູ້ຄຸ້ມຄອງກໍ່ຄື ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ກົມບັນຊີ ແລະ ການເງິນ ທະນາຄານແຫ່ງ ສປປ ລາວ ແມ່ນອະນຸຍາດໃຫ້ ທຄຕລ ສາມາດເລື່ອນເວລາໃນການຈັດຕັ້ງປະຕິບັດມາດຕະຖານລາຍການການເງິນ IFRS9 ອອກໄປກ່ອນຈົນກ່ວາຈະມີແຈ້ງການໃຫ້ປ່ຽນແປງ.

ເຖິງຢ່າງໃດກໍ່ຕາມ, ຜົນການດຳເນີນທຸລະກິດໃນໄລຍະ 06 ເດືອນຕົ້ນປີ 2018 ຂອງ ທຄຕລ ແມ່ນສາມາດສ້າງກຳໄລກ່ອນອາກອນໄດ້ເກີນຄາດໝາຍພໍສົມຄວນ ເມື່ອສົມທຽບກັບແຜນການ 06 ເດືອນຕົ້ນປີ 2018 ສາມາດ

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ປະຕິບັດໄດ້ເຖິງ 139,95% ແລະ ສົມທຽບກັບແຜນການປີ 2018 ສາມາດປະຕິບັດໄດ້ເຖິງ 69,98%. ດັ່ງນັ້ນ, ເພື່ອ ຮັບປະກັນໃຫ້ເອກະສານລາຍງານການເງິນສອດຄ່ອງກັບຫຼັກການສາກົນຢ່າງເຕັມສ່ວນເທື່ອລະກ້າວ ແນໃສ່ຮັບປະກັນ ຜົນປະໂຫຍດສູງສຸດຂອງຜູ້ລົງທຶນ ທຄຕລ ຈະສືບຕໍ່ກະກຽມຄວາມພ້ອມເພື່ອຮອງຮັບການປ່ຽນແປງດັ່ງກ່າວໃຫ້ສາ ມາດຈັດຕັ້ງປະຕິບັດໄດ້ໃນເວລາອັນຄວນ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງບັນດາທ່ານເພື່ອຮັບຊາບ.

ຜູ້ອຳນວຍການໃຫຍ່
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ພູຂົງ ຈັນທະຈັກ